ທະນາຄານ ພາບລິກ ລາວ ຈຳກັດ
PUBLIC BANK LAO

| **ຂໍ້ມູນກ່ຽວກັບການນຳໃຊ້ບັດ**<br><br>ກະລຸນາອ່ານຂໍ້ມູນກົດລະບຽບ ແລະ ເງື່ອນໄຂໃນການ ນຳໃຊ້ບັດໃຫ້ລະອຽດ ກ່ອນທີ່ທ່ານຈະຕັດສິນໃຈເປີດນຳໃຊ້ບັດວີຊ່າເດບິດໄລຟສະໄຕລ໌ຂອງທະນາຄານພາບລິກ ລາວ. | **ທະນາຄານພາບລິກ ລາວ ຈຳກັດ**<br><br>**ບັດວີຊ່າ ເດບິດໄລຟສະໄຕລ໌ ທະນາຄານພາບລິກ ລາວ** |
|---|---|

## 1. ບັດວີຊ່າເດບິດໄລຟສະໄຕລ໌ແມ່ນຫຍັງ?

ບັດວີຊ່າເດບິດໄລຟສະໄຕລ໌ທະນາຄານພາບລິກ ລາວ ແມ່ນການລວມເອົາ 2 ບັດມາໄວ້ໃນບັດດຽວ ຄືເປັນທັງບັດວີຊ່າເດບິດ ແລະ ບັດເອທີເອັມ. ໂດຍການຜູກບັດໃສ່ກັບບັນຊີເງິນຝາກປະຢັດ/ບັນຊີກະແສລາຍວັນ ສ່ວນບຸກຄົນ ແລະ ທຸກໆການໃຊ້ຈ່າຍ ແມ່ນຈະຖືກຫັກຈາກບັນຊີເງິນຝາກໂດຍກົງ. ນີ້ແມ່ນບັດວີຊ່າເດບິດໄລຟສະໄຕລ໌ ຂອງທະນາຄານພາບລິກ ລາວ, ການຈ່າຍຊຳລະໜີ້ ແມ່ນຫັກຈາກບັນຊີເງິນຝາກທະນາຄານໂດຍກົງ ອີງຕາມມູນຄ່າຂອງສິນຄ້າ ແລະ ບໍລິການຕ່າງໆທີ່ທ່ານໄດ້ນຳໃຊ້ຜ່ານບັດວີຊ່າດັ່ງກ່າວ. ທ່ານຕ້ອງມີບັນຊີເງິນຝາກປະຢັດ/ບັນຊີກະແສລາຍວັນ ກັບທາງທະນາຄານກ່ອນເພື່ອທຳການຜູກໃສ່ກັບບັດວີຊ່າ, ຖ້າຫາກທ່ານປິດບັນຊີທີ່ມີຢູ່ກັບທະນາຄານ ບັດວີຊ່າ ເດບິດ ຂອງທ່ານແມ່ນຈະຖືກຍົກເລີກໂດຍອັດຕະໂນມັດ.

## 2. ທ່ານຈະໄດ້ຮັບຫຍັງແດ່ຈາກການນຳໃຊ້ບັດວີຊ່າເດບິດໄລຟສະໄຕລ໌?

(i) <u>ລາຍຮັບຈາກດອກເບ້ຍ</u>

ຍອດເງິນຄົງເຫຼືອໃນບັນຊີຈະສ້າງລາຍຮັບຈາກດອກເບ້ຍເປັນລາຍເດືອນ, ລະບົບຈະທຳການຄິດໄລ່ດອກເບ້ຍໃຫ້ຕາມຍອດເງິນຄົງເຫຼືອໃນແຕ່ລະວັນຂອງບັນຊີບັດເດບິດ. ສ່ວນອັດຕາດອກເບ້ຍແມ່ນອີງຕາມອັດຕາດອກເບ້ຍເງິນຝາກຂອງບັນຊີຝາກປະຢັດ/ບັນຊີກະແສລາຍວັນ. ສຳລັບອັດຕາດອກເບ້ຍໃນປັດຈຸບັນກະລຸນາກວດສອບໄດ້ທີ່ສູນບໍລິການລູກຄ້າຂອງພວກເຮົາ ໂທ:(856)21 262 188 ຫຼື ເຂົ້າເບິ່ງໃນເວັບໄຊທ໌ຂອງພວກເຮົາໄດ້ທີ່: www.publicbank.com.la

(ii) <u>ການຖອນເງິນສົດ</u>

ລູກຄ້າສາມາດຖອນເງິນສົດຈາກຕູ້ ATM ທັງພາຍໃນ ແລະ ຕ່າງປະເທດໄດ້ທຸກຕູ້ທີ່ມີສັນຍາລັກຂອງ VISA/PLUS.

- ❖ ຖອນເງິນສົດຜ່ານຕູ້ ATM ຂອງທະນາຄານພາບລິກ ລາວແມ່ນບໍ່ໄດ້ເສຍຄ່າທຳນຽມ.
- ❖ ຖອນເງິນສົດຜ່ານຕູ້ ATM ຂອງທະນາຄານອື່ນແມ່ນເສຍຄ່າທຳນຽມ 5% ຂອງຈຳນວນເງິນທີ່ຖອນ ຫຼື ຕ່ຳສຸດ 100,000 ກີບຕໍ່ລາຍການ ຫຼື ຫຼາຍກ່ວາ.

(iii) <u>ຄວບຄຸມການນຳໃຊ້ບັດ</u>

ຮັກສາຍອດເງິນຄົງເຫຼືອໃນບັນຊີບັດຂອງທ່ານໃຫ້ເໝາະສົມກັບຮູບແບບການໃຊ້ຊີວິດ ເຮັດໃຫ້ທ່ານສາມາດຄວບຄຸມການໃຊ້ຈ່າຍດ້ວຍຕົວທ່ານເອງ ບໍ່ວ່າຈະເປັນການຖອນເງິນສົດຈາກຕູ້ ATM ແລະ ການໃຊ້ຈ່າຍໃນຊີວິດປະຈຳວັນ.

(iv) <u>ມີການຍອມຮັບໃນທົ່ວໂລກ</u>

ບັດວີຊ່າເດບິດໄລຟສະໄຕລ໌ ຂອງທະນາຄານພາບລິກ ລາວ ແມ່ນໄດ້ຖືກຍອມຮັບຫຼາຍກ່ວາ 29 ລ້ານຮ້ານຄ້າໃນທົ່ວໂລກ. ສາມາດນຳໃຊ້ໄດ້ກັບທຸກໆຮ້ານຄ້າທັງພາຍໃນ ແລະ ຕ່າງປະເທດທີ່ສະແດງສັນຍາລັກຂອງ VISA.

(v) <u>ມີຄວາມປອດໄພ ແລະ ບໍ່ຕ້ອງຖືເງິນສົດໃຫ້ຫຍຸ້ງຍາກ</u>

ດ້ວຍຄຸນລັກສະນະພິເສດ ແລະ ເຕັກໂນໂລຊີໃໝ່ຂອງສະມາດຊິບ (smart chip) ທີ່ມີຄວາມປອດໄພສູງໃນບັດວີຊ່າເດບິດໄລຟສະໄຕລ໌ ທະນາຄານພາບລິກລາວ. ລູກຄ້າສາມາດຊື້ສິນຄ້າໄດ້ກັບທຸກຮ້ານຄ້າທີ່ຍອມຮັບບັດວີຊ່າ, ມັນໃຊ້ໄດ້ດີ ແລະ ສະດວກສະບາຍປຽບເໝືອນມີເງິນສົດຢູ່ໃນມື ຊ່ວຍຫຼຸດຜ່ອນຄວາມສ່ຽງ ແລະ ບໍ່ຕ້ອງພົກພາເງິນສົດໃຫ້ຫຍຸ້ງຍາກ.

(vi) <u>ຜົນປະໂຫຍດ ແລະ ຄຸນລັກສະນະອື່ນໆຂອງບັດວີຊ່າເດບິດໄລຟສະໄຕລ໌ ທະນາຄານພາບລິກ ລາວ</u>

- ❖ ບໍ່ໄດ້ເສຍຄ່າທຳນຽມລາຍເດືອນ
- ❖ ບໍ່ໄດ້ເສຍຄ່າທຳນຽມການຈ່າຍຊຳລະຊ້າ
- ❖ ໃຊ້ໄດ້ດີເໝືອນບັດເຄຣດິດ

**3. ທ່ານຈະຕ້ອງຈ່າຍຄ່າທຳນຽມຫຍັງແດ່?**

(i) <u>ຄ່າທຳນຽມລາຍປີ</u>

ບັດຫຼັກ: 200,000 ກີບ

(ii) <u>ຄ່າທຳນຽມໃນການປ່ຽນບັດໃໝ່</u>

200,000 ກີບ

(iii) <u>ຄ່າທຳນຽມຖອນເງິນສົດ</u>

- ❖ ຖອນເງິນສົດຜ່ານຕູ້ ATM ຂອງທະນາຄານພາບລິກລາວ ບໍ່ໄດ້ເສຍຄ່າທຳນຽມ
- ❖ ຖອນເງິນສົດຜ່ານຕູ້ ATM ຂອງທະນາຄານອື່ນເສຍຄ່າທຳນຽມ 5% ຂອງຈຳນວນເງິນທີ່ຖອນ ຫຼື ຕ່ຳສຸດ 100,000 ກີບຕໍ່ລາຍການທີ່ສຳເລັດ ຫຼື ຫຼາຍກ່ວາ.

(iv) <u>ຄ່າທຳນຽມການແລກປ່ຽນຂອງລາຍການທີ່ເກີດຂຶ້ນຢູ່ຕ່າງປະເທດ</u>

ລາຍການທີ່ເກີດຂຶ້ນເປັນເງິນຕາຕ່າງປະເທດ ແມ່ນຈະຖືກແລກປ່ຽນມາເປັນເງິນກີບຂອງລາວ ໂດຍຜ່ານເງິນໂດລາເປັນສະກຸນກາງໃນການແລກປ່ຽນໃນມື້ທີ່ໄດ້ຮັບຮຽກເກັບ ແລະ/ຫຼື ມື້ທີ່ໄດ້ເຮັດທຸລະກຳ ສ່ວນອັດຕາແລກປ່ຽນແມ່ນກຳນົດໂດຍສູນ VISA ສາກົນ. ນອກຈາກນັ້ນທ່ານຍັງຈະໄດ້ຈ່າຍຄ່າທຳນຽມຄວາມຜິດດ່ຽງ 1.25% ຂອງຈຳນວນເງິນທີ່ປ່ຽນມາເປັນເງິນກີບແລ້ວສຳລັບລາຍການທີ່ເກີດຂຶ້ນເປັນເງິນຕາຕ່າງປະເທດ. ການແລກປ່ຽນອາດຈະຜິດດ່ຽງຈາກອັດຕາຂອງມື້ທີ່ເຮັດທຸລະກຳເນື່ອງຈາກຄວາມຜັນຜວນຂອງຕະຫຼາດ. ອັດຕາແລກປ່ຽນທີ່ປະກົດຈະແມ່ນອັດຕາສຸດທ້າຍ ແລະ ສະມາຊິກບັດຈະຕ້ອງຍອມຮັບຕໍ່ທຸກຄວາມສ່ຽງທີ່ເກີດຈາກການແລກປ່ຽນ, ການສູນເສຍ, ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍອື່ນໆທີ່ອາດຈະເກີດຂຶ້ນ.

(v) <u>ຄ່າທຳນຽມການຂໍໃບບັນທຶກການຂາຍ</u>

120,000 ກີບຕໍ່ລາຍການ

(vi) <u>ການຂໍໃບແຈ້ງລາຍການເຄື່ອນໄຫວບັນຊີເພີ່ມ</u>

ແມ່ນຈະບໍ່ໄດ້ເສຍຄ່າທຳນຽມ

(vii) <u>ການກວດສອບຍອດເງິນໃນບັນຊີ</u>

- ❖ ກວດສອບຍອດເງິນຜ່ານຕູ້ ATM ຂອງທະນາຄານພາບລິກລາວ ແລະ ຕູ້ ATM ຂອງທະນາຄານອື່ນແມ່ນບໍ່ໄດ້ເສຍຄ່າທຳນຽມ.

ທະນາຄານ ພາບລິກ ລາວ ຈຳກັດ
PUBLIC BANK LAO

**4. ຈະເກີດຫຍັງຂຶ້ນຖ້າທ່ານບໍ່ສາມາດປະຕິບັດຕາມສັນຍາຜູກມັດ?**

<u>ຄວາມຮັບຜິດຊອບຕໍ່ລາຍການທີ່ບໍ່ໄດ້ຮັບອະນຸຍາດ</u>

ໃນກໍລະນີບັດເກີດສູນຫາຍ/ຖືກລັກ, ຄວາມຮັບຜິດຊອບທີ່ເກີດຈາກລາຍການທີ່ບໍ່ໄດ້ຮັບອະນຸຍາດຂອງທ່ານສູງສຸດແມ່ນບໍ່ເກີນ 560,000 ກີບ, ຖ້າຫາກທ່ານບໍ່ໄດ້ກະທຳການສໍ້ໂກງ ຫຼື ບໍ່ໄດ້ຜິດພາດໃນການແຈ້ງໃຫ້ທະນາຄານຮັບຊາບຢ່າງຮີບດ່ວນ ແລະ ມີເຫດຜົນພຽງພໍ ຫຼັງຈາກທີ່ຮູ້ວ່າບັດເດບິດຂອງທ່ານສູນຫາຍ ຫຼື ຖືກລັກ. ຖ້າການກວດສອບເຫັນວ່າທ່ານມີສ່ວນກ່ຽວຂ້ອງ ຕໍ່ທຸລະກຳທີ່ບໍ່ໄດ້ຮັບອະນຸຍາດທີ່ເກີດຂຶ້ນນີ້, ທ່ານຈະຕ້ອງຮັບຜິດຊອບຕໍ່ໜີ້ສິນທັງໝົດທີ່ເກີດຂຶ້ນ, ລວມເຖິງຄ່າທຳນຽມທາງການເງິນອື່ນໆ ທັງກ່ອນ ຫຼື ຫຼັງຈາກທີ່ທະນາຄານຈະໄດ້ຮັບການຢັ້ງຢືນ. ມັນເປັນການເຫັນດີຢ່າງຈະແຈ້ງວ່າທະນາຄານຈະບໍ່ມີຄວາມຮັບຜິດຊອບໃດໆ ຕໍ່ການກຳນົດວົງເງິນດັ່ງກ່າວ.

**5. ຄວາມສ່ຽງທີ່ອາດຈະເກີດຂຶ້ນມີຫຍັງແດ່?**

ບັດຂອງທ່ານຖືກລັກ ຫຼື ສູນຫາຍ.

ທ່ານຄວນແຈ້ງໃຫ້ທະນາຄານ ພາບລິກ ລາວ ຈຳກັດ ຊາບໃນທັນທີຫຼັງຈາກທີ່ພົບວ່າບັດເດບິດຂອງທ່ານຖືກລັກ ຫຼື ສູນຫາຍ. ກໍລະນີເກີດເຫດການດັ່ງກ່າວໃຫ້ໂທ: +(856)21 262188. ທ່ານຄວນລາຍງານຕໍ່ກັບທະນາຄານໃນທັນທີເຊັ່ນດຽວກັນເມື່ອບຸກຄົນອື່ນຮູ້ລະຫັດບັດຂອງທ່ານ.

**6. ທ່ານຈະຕ້ອງເຮັດແນວໃດຖ້າຕ້ອງການປ່ຽນແປງຂໍ້ມູນການຕິດຕໍ່?**

ມັນມີຄວາມສຳຄັນຫຼາຍໃນການແຈ້ງເປັນລາຍລັກອັກສອນຕໍ່ ທະນາຄານພາບລິກ ລາວ ຈຳກັດ ກ່ຽວກັບການປ່ຽນແປງຂໍ້ມູນການຕິດຕໍ່ຂອງທ່ານເພື່ອໃຫ້ແນ່ໃຈວ່າທຸກໆຂໍ້ມູນທີ່ສົ່ງໄປໃຫ້ນັ້ນຈະເຖິງມືຂອງທ່ານຢ່າງທັນເວລາ.

ທ່ານສາມາດຕິດຕໍ່ຫາ ທະນາຄານ ພາບລິກ ລາວ ຈຳກັດ ໄດ້ທີ່:

**100/1-4, ຖະໜົນ ຂຸນບູລົມ, ຕູ້ ປນ 6614**
**ບ້ານ ຫັດສະດີໃຕ້, ເມືອງ ຈັນທະບູລີ,**
**ນະຄອນຫຼວງວຽງຈັນ, ສປປ ລາວ**
**ໂທ: (856-21) 262188**
**ແຟັກ: (856-21) 261 077**
**ອີ-ເມວ: laosccd@publicbank.com.la**

ຂໍ້ມູນການນຳໃຊ້ບັດນີ້ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ມັງກອນ 2024 ເປັນຕົ້ນໄປ.